ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

<u>ສຳນັກງານນາຍົກລັດຖະມົນຕີ</u>

ຄະນະເລຂາທິການລັດຖະບານ

ເລກທີ 1179/ ຄລບ

ນະຄອນຫຼວງວຽງຈັນ, ວັນທີ 17 . 6 . 2011

## <u>ແຈ້ງການ</u>

ເຖິງ : ທ່ານລັດຖະມົນຕີວ່າການ ກະຊວງກະຊວງໂຍທາທິການ ແລະ ຂົນສົ່ງ. ✓

ເລື່ອງ : ການຍົກເລີກບັນດາປ້ອມ-ຈຸດກວດກາ ເພື່ອເກັບຄ່າຕ່າງໆໂດຍບໍ່ຖືກຕ້ອງ ແລະ ການອຳນວຍຄວາມສະດວກ ໃຫ້ແກ່ການຂົນສົ່ງສິນຄ້າ ແລະ ຂົນສົ່ງໂດຍສານ ຜ່ານດ່ານສາກົນ ທົ່ວປະເທດ.

- ອີງຕາມໜັງສືລາຍງານ ສະບັບເລກທີ 06948/ ຍທຂ, ລົງວັນທີ 11 ພຶດສະພາ 2011ຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

- ອີງຕາມການຕົກລົງ ແລະ ຊີ້ນຳ ຂອງທ່ານນາຍົກລັດຖະມົນຕີ ໃນວັນທີ 14 ມິຖຸນາ 2011.

ຄະນະເລຂາທິການລັດຖະບານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບດັ່ງນີ້ : " ເຫັນດີຕາມການສະເໜີ ຂອງກະຊວງໂຍທາທິການ ແລະ ຂົນສົ່ງຄື :

1. ໃຫ້ຍົກເລີກການກວດກາ ຢູ່ບັນດາດ່ານຊັ່ງນ້ຳໜັກໃດ ທີ່ບໍ່ມີຄວາມຈຳເປັນ ແລະ ມີຄວາມຊ້ຳຊ້ອນໃນການກວດກາ. ໝາຍວ່າຈາກດ່ານຊັ່ງນ້ຳໜັກ ທີ່ມີທັງໝົດໃນທົ່ວປະເທດ 39 ແຫ່ງ ເຫັນດີໃຫ້ຍົກເລີກ 26 ແຫ່ງ, ໂດຍໃຫ້ຫັນມານຳໃຊ້ດ່ານດັ່ງກ່າວ ສຳລັບການກວດກາສະເພາະກິດເທົ່ານັ້ນ.
2. ສຳລັບດ່ານທີ່ເຫຼືອ ຈຳນວນ 13 ແຫ່ງ ທີ່ຢູ່ຕາມບັນດາດ່ານສາກົນ ແລະ ເສັ້ນທາງຈຳນວນໜຶ່ງແມ່ນໃຫ້ຮັກສາໄວ້ ເພື່ອສືບຕໍ່ດຳເນີນການກວດກາຕໍ່ໄປ."

ໝາຍເຫດ : ໄດ້ມີບັນຊີ ບັນດາສະຖານີຊັ່ງນ້ຳໜັກ ທີ່ໃຫ້ຮັກສາໄວ້ ແລະ ໃຫ້ຍົກເລີກ ຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

ໂຕແທນ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ

ຫົວໜ້າຄະນະເລຂາທິການລັດຖະບານ

<u>ບ່ອນນຳສົ່ງ :</u>

| | |
|---|---|
| - ນາຍົກ, ຮອງນາຍົກລັດຖະມົນຕີ | 05 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ກະຊວງແຜນການ-ການລົງທຶນ | 01 ສະບັບ |
| - ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນທົ່ວປະເທດ ຜູ້ລະ | 01 ສະບັບ |
| - ເກັບມ້ຽນ | 08 ສະບັບ |



ຄຳພັນ ເຜີຍຍະວົງ

ຕາຕະລາງຈຳນວນສະຖານີຊັ່ງນ້ຳໜັກ ທີ່ນຳສະເໜີ ເພື່ອຮັກສາໄວ້ ແລະ ຍົກເລີກ ໃນຂອບເຂດ ທົ່ວປະເທດ

| No | ຊື່ແຂວງ | ທີ່ຕັ້ງ ສະຖານີ | ທຶນກໍ່ສ້າງ | ຈຳນວນ ສະຖານີ | ນຳສະເໜີ | | ນຳສະເໜີ | |
|---|---|---|---|---|---|---|---|---|
| | | | | | ຮັກສາ | ຍົກເລີກ | ຮັກສາ | ຍົກເລີກ |
| 1 | ຜົ້ງສາລີ | ທາງເລກທີ 1B, 3 ແຍກບ້ານຍໍ້, ເມືອງບຸນເໜືອ, ແຂວງຜົ້ງສາລີ. | RMP1 | 1 | | √ | | 1 |
| 2 | ຫຼວງນ້ຳທາ | ທາງເລກທີ 17A, 3 ແຍກເມືອງສິງ, ບ້ານສີງຈະເລີນ, ເມືອງສິງ, ແຂວງຫຼວງນ້ຳທາ (ຊາຍແດນລາວ - ຈີນ). | RMP1 | 1 | √ | | 1 (ADB) | |
| | | ທາງເລກ R3 , ບ້ານບໍ່ເຕັນໃໝ່, ເມືອງນ້ຳທາ, ແຂວງຫລວງນ້ຳທາ (ຊາຍແດນລາວ - ຈີນ) | ADB/R3 | 1 | √ | | 1(ADB) | |
| 3 | ບໍ່ແກ້ວ | ທາງເລກ 3 ຫລັກ 2 ເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ (ບໍ່ມີສະຖານີ, ກວດກາເປັນບາງຄັ້ງຄາວ) | ADB/R3 | 0 | | √ | | |
| 4 | ຫົວພັນ | ທາງເລກທີ 6, ກມ 171, ບ້ານເຕືອຍ, ເມືອງວຽງໄຊ ແຂວງຫົວພັນ (ຊາຍແດນ ລາວ-ຫວຽດນາມ) | RMF | 1 | √ | | 1 | |
| 5 | ຊຽງຂວາງ | ທາງເລກ 7 ຫລັກ 14, ບ້ານລັງໄຂ, ເມືອງພວນ, ແຂວງ ຊຽງຂວາງ | RMP1 | 1 | | √ | | 1 |
| | | ທາງເລກທີ 7, ຊາຍແດນນ້ຳກັ່ນ , ແຂວງຊຽງຂວາງ(ຊາຍແດນ ລາວ-ຫວຽດນາມ) | RMP1 | 1 | √ | | 1 | |
| 6 | ອຸດົມໄຊ | ທາງເລກທີ 13 ເໜືອ, ກມ 4, ບ້ານຫ້ວຍຂຸມ, ເມືອງໄຊ, ແຂວງອຸດົມໄຊ. | RMP2 | 1 | | √ | | 1 |
| 7 | ຫຼວງພະບາງ | ທາງເລກທີ 13 ເໜືອ, ກມ 20, ບ້ານມູດ, ເມືອງຊຽງເງິນ, ແຂວງຫຼວງພະບາງ. | RMP1 | 1 | | √ | | 1 |
| 8 | ໄຊຍະບູລີ | ທາງເລກທີ 4,ເມືອງປາກລາຍ, ແຂວງໄຊຍະບູລີ (ຂົວຊາຍແດນນ້ຳເຫືອງ ລາວ-ໄທ) | ADB11 | 1 | √ | | 1 | |
| | | ທາງເລກ 4, ຫລັກ 260, ເມືອງແກນທ້າວ, ແຂວງ ໄຊຍະບູລີ(ຂົວຊາຍແດນນ້ຳເຫືອງ ລາວ-ໄທ) | ເອກະຊົນ | 1 | | √ | | 1 |
| 9 | ແຂວງວຽງຈັນ | ທາງເລກທີ 13 ເໜືອ, ກມ128, ບ້ານສີວິໄລ, ເມືອງຫີນເຫີບ, ແຂວງວຽງຈັນ. | RMP1 | 1 | | √ | | 1 |
| 10 | ນະຄອນຫຼວງ ວຽງຈັນ | ທາງເລກທີ 13 ເໜືອ, ກມ 21, ບ້ານໂຄກສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ. | RMP1 | 1 | | √ | | 1 |
| | | ທາງເລກທີ A 12, ກມ 17, ບ້ານດົງໂພສີ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ (ຊາຍແດນ ລາວ-ໄທ). | RMP1 | 1 | √ | | 1 | |
| | | ທາງເລກທີ 11, ກມ 5, ບ້ານເກົ້າລ້ຽວ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ. | RMP1 | 1 | | √ | | 1 |
| | | ທາງເລກທີ 13 ເໜືອ, ກມ 30, ບ້ານແຈ້ງສະຫວ່າງ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ. | RMP1 | 1 | | √ | | 1 |
| | | ໜ່ວຍກວດກາເຄື່ອນທີ່ (ບໍ່ມີສະຖານີ, ກວດກາເປັນບາງຄັ້ງຄາວ) | RMP1 | 0 | | √ | | |
| | | ທາງເລກທີ 1, ຂົວມິດຕະພາບ I, ບ້ານດົງໂພສີ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ. | ເອກະຊົນ | 1 | | √ | | 1 |

| | | | | | | | | |
|---|---|---|---|---|---|---|---|---|
| 11 | ບໍລິຄຳໄຊ | ທາງເລກທີ 8, ກມ 1, ບ້ານວຽງຄຳ, ເມືອງປາກກະດິງ, ແຂວງບໍລິຄຳໄຊ | SIDA | 1 | | √ | | 1 |
| | | ທາງເລກທີ 8, ກມ 10, ບ້ານຫຼັກ 12, ເມືອງຄຳເກີດ, ແຂວງບໍລິຄຳໄຊ(ຊາຍແດນລາວ- ຫວຽດນາມ) | SIDA | 1 | √ | | 1 | |
| | | ທາງເລກທີ 13 ໃຕ້, ກມ 244, ບ້ານນາຮີນ, ເມືອງປາກກະດິງ, ແຂວງບໍລິຄຳໄຊ | RMP1 | 1 | | √ | | 1 |
| | | ທາງເລກທີ 13 ໃຕ້, ກມ 2, ເມືອງປາກຊັນ, ແຂວງບໍລິຄຳໄຊ | RMP1 | 1 | | √ | | 1 |
| 12 | ຄຳມ່ວນ | ທາງເລກທີ 13 ໃຕ້, ກມ 8, ບ້ານນາບອບ, ເມືອງທ່າແຂກ, ແຂວງຄຳມ່ວນ | RMP1 | 1 | | √ | | 1 |
| | | ທາງເລກທີ 13 ໃຕ້, ກມ 50, ບ້ານຫຼັກເຈັດ, ເມືອງມະຫາໄຊ, ແຂວງຄຳມ່ວນ(ຊາຍແດນລາວ-ຫວຽດນາມ) | RMP1 | 1 | √ | | 1 | |
| | | ທາງເລກທີ 13 ໃຕ້, ກມ 4, ປາສັກ, ບ້ານທ່າແຂກເໜືອ, ເມືອງທ່າແຂກ, ແຂວງຄຳມ່ວນ. | RMP1 | 1 | | √ | | 1 |
| 13 | ສະຫວັນນະເຂດ | ທາງເລກທີ 9, ກມ 25, ບ້ານນາທາດ, ເມືອງອຸທຸມພອນ, ແຂວງສະຫວັນນະເຂດ. | RMP1 | 1 | | √ | | 1 |
| | | ທາງເລກທີ 9, ກມ 64, ບ້ານຄຳເຕີຍ, ເມືອງອາດສະພັງທອງ, ແຂວງສະຫວັນນະເຂດ. | RMP1 | 1 | | √ | | 1 |
| | | ທາງເລກ 9, ຂົວມິດຕະພາບ 2 ລາວ-ໄທ , ແຂວງສະຫວັນນະເຂດ (ຊາຍແດນ ລາວ-ໄທ) | JBIC/R9 | 1 | √ | | 1 | |
| | | ທາງເລກທີ 9,(ແດນສະຫວັນ) ເມືອງເຊໂປນ, ແຂວງສະຫວັນນະເຂດ.(ຊາຍແດນລາວ-ຫວຽດນາມ) | ADB | 1 | √ | | 1 | |
| | | ທາງເລກທີ 13 ໃຕ້, ກມ 35, ບ້ານຫຼັກ35, ເມືອງຈຳພອນ, ແຂວງສະຫວັນນະເຂດ. | RMP1 | 1 | | √ | | 1 |
| 14 | ຈຳປາສັກ | ທາງເລກທີ 13 ໃຕ້, ກມ 26, ເມືອງຊະນະສົມບູນ, ແຂວງຈຳປາສັກ. | RMP1 | 1 | | √ | | 1 |
| | | ທາງເລກທີ 16, ກມ 11, ເມືອງບາຈຽງຈະເລີນສຸກ, ແຂວງຈຳປາສັກ. | RMP1 | 1 | | √ | | 1 |
| | | ທາງເລກທີ 13 ໃຕ້ (ປາກເຊ-ໂຂງ), ກມ 20, ເມືອງປະທຸມພອນ, ແຂວງຈຳປາສັກ. | ADB8 | 1 | | √ | | 1 |
| | | ທາງເລກທີ 13 ໃຕ້ (ປາກເຊ-ໂຂງ), ກມ 84, ເມືອງໂຂງ, ແຂວງຈຳປາສັກ.(ຊາຍແດນລາວ-ກຳປູເຈຍ) | RMP1 | 1 | √ | | 1 | |
| | | ກມ 7 ສາລາຂຽວດົງຈອງ , ເມືອງປາກເຊ, ແຂວງຈຳປາສັກ. | RMP1 | 1 | | √ | | 1 |
| | | ທາງເລກທີ 16, ກມ 30, ເມືອງໂພນທອງ, ແຂວງຈຳປາສັກ (ຊາຍແດນລາວ-ໄທ). | RMP1 | 1 | √ | | 1 | |
| 15 | ສາລະວັນ | ທາງເລກທີ 13ໃຕ້, ກມ 113, ບ້ານນາທອງ, ເມືອງນະຄອນເພັງ, ແຂວງສາລະວັນ. | ບໍ່ມີຊື່ | 1 | | √ | | 1 |
| | | ທາງເລກທີ 20, ກມ 26, ບ້ານແຍ່ງ, ເມືອງສາລະວັນ, ແຂວງສາລະວັນ. | ບໍ່ມີຊື່ | 1 | | √ | | 1 |
| | | ທາງເລກທີ 15, ກມ 156, ບ້ານລາໄລກ່ອງ, ເມືອງສະມ້ວຍ, ແຂວງສາລະວັນ. | RMP2 | 1 | | √ | | 1 |

| | | | | | | | | |
|---|---|---|---|---|---|---|---|---|
| 16 | ອັດຕະປື | ທາງເລກທີ 18B, ກມ 7, ບ້ານລັບໝາກກ່ອງ, ເມືອງໄຊເສດຖາ, ແຂວງອັດຕະປື (ຊາຍແດນລາວ-ຫວຽດນາມ) | RMP1 | 1 | √ | | 1 | |
| 17 | ເຊກອງ | ທາງເລກທີ 16, ກມ 51, ບ້ານທ່າແຕງ, ເມືອງທ່າແຕງ, ແຂວງເຊກອງ. | RMP1 | 1 | | √ | | 1 |
| | | ລວມທັງໝົດ | | 39 | 13 | 26 | 11 | 26 |